ບົດລາຍງານ

ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2023

ໂດຍ: ຕະຫຼາດຫຼັກຊັບລາວ

ສາລະບານ

1. ຂໍ້ມູນກ່ຽວກັບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 1

1.1. ຂໍ້ມູນທົ່ວໄປ 1

1.2. ຂໍ້ມູນທາງການເງິນ 1

1.3. ຂໍ້ມູນສະພາບໍລິຫານ 1

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 1

1.5. ຂໍ້ມູນຄະນະອຳນວຍການ 2

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG 2

2. ພາບລວມຄະແນນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ 2

4.1. ຜົນການປະເມີນຄະແນນຕົວຈິງ 2

2.1. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 3

3. ຂໍ້ປະຕິບັດໄດ້ສອດຄ່ອງ ແລະ ຂໍ້ຄົງຄ້າງ 4

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 4

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 5

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 6

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 8

4. ສິ່ງທີ່ຕ້ອງໄດ້ປັບປຸງ 9

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງທະນາຄານ 9

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 10

1. ຂໍ້ມູນກ່ຽວກັບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

1.1. ຂໍ້ມູນທົ່ວໄປ

ຫົວຂໍ້	ລາຍລະອຽດ
ຊື່ບໍລິສັດ:	ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)
ທີ່ຕັ້ງສຳນັກງານ:	ສຳນັກງານໃຫ່ຍ, ບ້ານ ຊຽງຍືນ ເລກທີ 01, ຖະໜົນ: ປາງຄຳ, ເມືອງຈັນທະບຸລີ, ນະຄອນຫລວງວຽງຈັນ
ເບີໂທລະສັບ:	021 213000
ປະເພດທຸລະກິດ:	ບໍລິການ ທະນາຄານ
ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ:	10 ມັງກອນ 2011
ເວັບໄຊ:	www.bcel.com.la
ຈຳນວນພະນັກງານ:	2.107 ຄົນ
ຈຳນວນຮຸ້ນຈົດທະບຽນ:	207.723.300 ຮຸ້ນ
ລາຄາຕະຫຼາດ (30/12/2022):	4.950 ກີບ/ຮຸ້ນ
ມູນຄ່າຕະຫຼາດ (30/12/2022):	1.028.230 ລ້ານກີບ

1.2. ຂໍ້ມູນທາງການເງິນ

ຕົວເລກຂໍ້ມູນການເງິນ (31 ທັນວາ 2022)	
ຊັບສິນ: 94.493.015 ລ້ານກີບ	ລາຍຮັບ: 3.749.948 ລ້ານກີບ
ໜີ້ສິນ: 92.135.055 ລ້ານກີບ	ລາຍຈ່າຍ: 3.521.758 ລ້ານກີບ
ທຶນ: 2.357.960 ລ້ານກີບ	ກຳໄລສຸດທິ: 228.190 ລ້ານກີບ

1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານຂອງ ທຄຕລ ປະກອບມີສະມາຊິກສະພາບໍລິຫານທັງໝົດ 9 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

1) ທ່ານ ບຸນປອນ ອັນນະຈິດ — ປະທານສະພາບໍລິຫານ
2) ທ່ານ ຄຳສຸກ ສຸນດາລາ — ຮອງປະທານ, ກຳມະການອິດສະຫຼະ
3) ທ່ານ ປະສົມເພັດ ຄຳຕັນ — ສະມາຊິກ
4) ທ່ານ ສະຕີເຟັນ ມັງເຈຍວາກາ — ສະມາຊິກ
5) ທ່ານ ນາງ ສາຍສະໝອນ ຈັນທະຈັກ — ສະມາຊິກ
6) ທ່ານ ຣສ ທອງເພັດ ຈັນທະນີວົງ — ສະມາຊິກອິດສະຫຼະ
7) ທ່ານ ນາງ ລັດດາວັນ ຊົງວິໄລ — ສະມາຊິກອິດສະຫຼະ
8) ທ່ານ ສອນໄຊ ສີລາເພັດ — ສະມາຊິກອິດສະຫຼະ
9) ທ່ານ ວຽງສຸກ ຈຸນທະວົງ — ສະມາຊິກ

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ທຄຕລ ປະກອບດ້ວຍ 4 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການ ປະກອບດ້ວຍສະມາຊິກ ຕາມລາຍລະອຽດ ດັ່ງນີ້:

1) ຄະນະກຳມະການກວດສອບ

1. ທ່ານ ສອນໄຊ ສີລາເພັດ ປະທານ
2. ທ່ານ ຣສ ທອງເພັດ ຈັນທະວົງ ຮອງປະທານ
3. ທ່ານ ປະສົມເພັດ ຄຳຕັນ ສະມາຊິກ

2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1. ທ່ານ ຣສ ທອງເພັດ ຈັນທະນີວົງ ປະທານ
2. ທ່ານ ປະສົມເພັດ ຄຳຕັນ ຮອງປະທານ
3. ທ່ານ ສອນໄຊ ສີລາເພັດ ສະມາຊິກ

3) ຄະນະກຳມະການການຄັດເລືອກ ແລະ ກຳນົດຄ່າຕອບແທນ

1. ທ່ານ ຄຳສຸກ ສູນດາລາ ປະທານ
2. ທ່ານ ບຸນປອນ ອັນນະຈິດ ຮອງປະທານ
3. ທ່ານ ນາງ ສາຍສະໝອນ ຈັນທະຈັກ ສະມາຊິກ

4) ຄະນະກຳມະການຄຸ້ມຄອງບໍລິຫານ

1. ທ່ານ ນາງ ລັດດາວັນ ຊົງວິໄລ ປະທານ
2. ທ່ານ ນາງ ສາຍສະໝອນ ຈັນທະຈັກ ຮອງປະທານ
3. ທ່ານ ສອນໄຊ ສີລາເພັດ ສະມາຊິກ
4. ທ່ານ ວຽງສຸກ ຈຸນທະວົງ ສະມາຊິກ

1.5. ຂໍ້ມູນຄະນະອຳນວຍການ

1. ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ
2. ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ
3. ທ່ານ ກົງສັກ ສຸພອນສີ ຮອງຜູ້ອຳນວຍການ
4. ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ
5. ທ່ານ ນາງ ບົວໄພວັນ ນັນດາວົງ ຮອງຜູ້ອຳນວຍການ
6. ທ່ານ ສາຍຈິດ ສົມມະວົງ ຮອງຜູ້ອຳນວຍການ

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

ຊື່ ແລະ ນາມສະກຸນ	ເບີໂທ	ອີເມລ
ທ່ານ ບຸນລ້ອມ ອຸ່ນລະທະວົງ	020 2220 4337	bounlouane@bcel.com.la
ທ່ານ ວັນປະເສີດ ບຸນນະຜົນ	020 5662 2442	bounnaphonh@gmail.com
ທ່ານ ປອ ອິນປົ່ງ ສີລິພູທອນ	020 2888 5353	Inpong007@gmail.com

2. ພາບລວມຄະແນນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

4.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນການການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ຂອງ ທຄຕລ ປະຈຳປີ 2023 ແມ່ນເຫັນວ່າ: ທຄຕລ ໄດ້ຄະແນນທັງໝົດ 80.22 ຄະແນນ ຈັດເປັນ ປະເພດດີຫຼາຍ ຊຶ່ງມີລາຍລະອຽດ ດັ່ງນີ້:

ພາກ	ຄະແນນທັງໝົດ	ຄະແນນຕົວຈິງ
ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ	10	9.33
ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ	10	8.18
ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ	40	34.05
ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ	40	28.65
ລວມ	**100**	**80.22**


1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 9.33 ຄະແນນ;
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 8.18 ຄະແນນ;
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 34.05 ຄະແນນ ແລະ
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້ 28.65 ຄະແນນ.

2.1. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນ ປະກອບມີ 3 ປະເພດ ຄື: FA (Fully Applied) - ປະຕິບັດໄດ້ທັງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ທຄຕລ ສາມາດປະຕິບັດໄດ້ດັ່ງນີ້:

ທຄຕລ	ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ		ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ		ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ		ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ		ລວມ	
	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%
ປະຕິບັດໄດ້ທັງໝົດ	13	87%	7	64%	29	78%	25	68%	74	74%
ປະຕິບັດໄດ້ບາງສ່ວນ	2	13%	4	36%	5	14%	3	8%	14	14%
ບໍ່ສາມາດປະຕິບັດໄດ້	0	0%	0	0%	3	8%	9	24%	12	12%
ລວມ	**15**	**100%**	**11**	**100%**	**37**	**100%**	**37**	**100%**	**100**	**100%**

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ທຄຕລ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັງໝົດ 74%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ 14% ແລະ ບໍ່ສາມາດປະຕິບັດໄດ້ 12% ຂອງຂອງຄຳຖາມທັງໝົດ. ຜົນການປະເມີນຂ້າງເທິງ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:



3. ຂໍ້ປະຕິບັດໄດ້ສອດຄ່ອງ ແລະ ຂໍ້ຄົງຄ້າງ

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ທຄຕລ ສາມາດປະຕິບັດໄດ້ທັງໝົດ (FA) 87%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 13% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 0% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້ສອດຄ່ອງ	ຂໍ້ຄົງຄ້າງ
- ການຈັດກອງປະຊຸມຜູ້ຖືຮຸ້ນ: ທຄຕລ ໄດ້ສົ່ງໜັງສືແຈ້ງເຊີນໃຫ້ແກ່ຜູ້ຖືຮຸ້ນ ພ້ອມທັງຄັດຕິດເອກະສານສຳຄັນກ່ອນກອງປະຊຸມຜູ້ຖືຮຸ້ນ ພ້ອມນັ້ນ, ກໍໄດ້ແຈ້ງຂັ້ນຕອນ ວິທີການລົງຄະແນນສຽງ ແລະ ຜົນຂອງການລົງຄະແນນໃນແຕ່ລະວາລະ ລວມເຖິງການໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ. - ທຄຕລ ໄດ້ກຳນົດນະໂຍບາຍກ່ຽວກັບການເງິນປັນຜົນ ແລະ ໄດ້ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນຕາມລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ພາຍໃນ 30 ວັນ ນັບແຕ່ມື້ມີມະຕິຈ່າຍເງິນປັນຜົນ. - ທຄຕລ ໄດ້ກຳນົດ ແລະ ໃຫ້ສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືຮຸ້ນລວມກັນແຕ່ 5% ຂຶ້ນໄປໄດ້ຮັບສິດໃນການສະເໜີລາຍຊື່ຜູ້ສະໝັກ ເພື່ອປະກອບເປັນສະມາຊິກສະພາບໍລິຫານຂອງບໍລິສັດ, ສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືຮຸ້ນ 10% ຂຶ້ນໄປ ມີສິດສະເໜີເຖິງສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ	- ທຄຕລ ຍັງບໍ່ໄດ້ກຳນົດເຫດການກ່ຽວກັບທຸລະກຳ ຊື້ ຂາຍ ຫຼື ໂອນ ຊັບສິນ ທີ່ມີມູນຄ່າ 50% ຂຶ້ນໄປ ຂອງຊັບສິນທັງໝົດ ຊຶ່ງຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ.

ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ຕາມລະບຽບພາຍໃນຂອງ ບໍລິສັດ. - ລະບຽບພາຍໃນຂອງ ທຄຕລ ໄດ້ກຳນົດເຫດການກ່ຽວ ກັບການອອກຈຳໜ່າຍຮຸ້ນໃໝ່ໄດ້ຜ່ານກອງປະຊຸມຜູ້ຖືຮຸ້ນ ພ້ອມນັ້ນ, ຜູ້ຖືຮຸ້ນໄດ້ຮັບສິດໃນການຈອງຊື້ຮຸ້ນອອກໃໝ່ ໃນອັດຕາສ່ວນ ແລະ ວິທີແບ່ງປັນຮຸ້ນກ່ອນສະເໜີຂາຍ ໃຫ້ແກ່ພາກສ່ວນພາຍນອກ. - ການແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບຕ້ອງໄດ້ຮັບອະນຸມັດຈາກກອງ ປະຊຸມຜູ້ຖືຮຸ້ນ. - ໃນການປະຕິບັດຕົວຈິງ ທຄຕລ ເປີດເຜີຍໜັງສືເຊີນເຂົ້າ ຮ່ວມກອງປະຊຸມຜູ້ຖືຮຸ້ນຕາມກຳນົດເວລາ. - ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດ ຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອ ປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນ ກ່ຽວກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ. - ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າ ຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ.	

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ທຄຕລ ສາມາດປະຕິບັດໄດ້ທັງໝົດ (FA) 64% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 36% ແລະ ບໍ່ ສາມາດປະຕິບັດໄດ້ແມ່ນ (NA) 0% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້ສອດຄ່ອງ	ຂໍ້ຄົງຄ້າງ
- ສະພາບໍລິຫານ ໄດ້ກຳນົດນະໂຍບາຍດ້ານຄວາມປອດໄພ, ສະຫວັດດີການສັງຄົມ, ການຝຶກອົບຮົມ ແລະ ພັດທະນາ ບຸກຄະລາກອນ ເພື່ອໃຫ້ພະນັກງານຂອງບໍລິສັດ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກ ງານໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍຂອງບລິສັດ ແລະ ມີ ສ່ວນຮ່ວມໃນວຽກງານຄຸ້ມຄອງບໍລິຫານບໍລິສັດ. - ທຄຕລ ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນ ເພື່ອຮັບຄຳເຫັນ ຫຼື ຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວ ກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກ	- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳ ເນີນການຢູ່. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາ ແບບຍືນຍົງ. - ນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ ແມ່ນຍັງບໍ່ໄດ້ຮັບຮອງຈາກສະພາ ບໍລິຫານຂອງບໍລິສັດ.

ເຂົ້າ ໄວ້ໃນເວັບໄຊ ຫຼື ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ. - ທຄຕລ ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຮ້ອງຮຽນ ຂອງພະນັກງານ ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງ ບໍລິສັດ. - ສະພາບໍລິຫານ ໄດ້ກຳນົດນະໂຍບາຍເພື່ອປົກປ້ອງ ພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ຕໍ່ພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ. - ສະພາບໍລິຫານ ໄດ້ກຳນົດນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງບໍລິສັດ. - ສະພາບໍລິຫານ ໄດ້ກຳນົດນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້.	

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ທຄຕລ ສາມາດປະຕິບັດໄດ້ທັງໝົດ (FA) ຄິດເປັນ 76%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 14% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 11% ຂອງຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້ສອດຄ່ອງ	ຂໍ້ຄົງຄ້າງ
- ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງ ສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນ ໃນເອກະສານລາຍງານການເງິນຂອງບໍລິສັດ. - ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງບໍລິສັດໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເວັບໄຊຂອງ ທຄຕລ. - ທຄຕລ ໄດ້ເປີດເຜີຍຂໍ້ມູນລະອຽດກ່ຽວກັບ ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມຂອງຕົນ, ຂໍ້ມູນທາງການເງິນຂໍ້ມູນທີ່ບໍ່ແມ່ນການເງິນ, ນະໂຍບາຍປັນຜົນ ແລະ ຄ່າຕອບແທນ ຂອງສະພາບໍລິຫານ ແຕ່ລະທ່ານ ໃນແຕ່ລະປີ, ປະຫວັດ	- ທຄຕລ ບໍ່ໄດ້ເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນເປັນຕົ້ນຂັ້ນຕອນການພິຈາລະນາ ແລະ ການອະນຸມັດຂັ້ນຕອນກ່ຽວກັບລາຍການ RPT ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ຂອງທະນາຄານ. - ທຄຕລ ບໍ່ໄດ້ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້-ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ. - ສະພາບໍລິຫານບໍ່ໄດ້ເປີດເຜີຍມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່.

ການສຶກສາ ແລະ ການຝຶກອົບຮົມຂອງສະມາຊິກສະພາບໍລິຫານ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງຕົນ. - ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບປັດໄຈຄວາມສ່ຽງຂອງບໍລິສັດໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ. - ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. - ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການປ່ຽນແປງ ຫຼື ເຫດການທີ່ສຳຄັນທີ່ເກີດຂຶ້ນພາຍໃນປີໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ເອກະສານລາຍງານການເງິນ, ບົດລາຍງານປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ. - ທຄຕລ ໄດ້ເປີດເຜີຍຂໍ້ ມູນກ່ຽວກັບພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບນັກລົງທຶນ (ນັກລົງທຶນສຳພັນ) ໃນເວັບໄຊຂອງທະນາຄານ. - ທຄຕລ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ. - ທຄຕລ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ. - ທຄຕລ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ.	- ທຄຕລ ບໍ່ໄດ້ເປີດເຜີຍລະບຽບພາຍໃນກ່ຽວກັບ ການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊຂອງບໍລິສັດ. - ທຄຕລ ບໍ່ໄດ້ເປີດເຜີຍລະອຽດກ່ຽວກັບນະໂຍບາຍກ່ຽວກັບຄ່າຕອບແທນ ແລະ ມູນຄ່າລວມທັງໝົດຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.

- ທຄຕລ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນ ພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ. - ທຄຕລ ໄດ້ມີການສັບປ່ຽນ ບໍລິສັດກວດສອບທຸກໆ 5 ປີ. - ທຄຕລ ໄດ້ເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບພາຍເອກະສານລາຍງານການເງິນຂອງແຕ່ລະປີ ໃນບົດລາຍງານການເງິນປະຈຳປີ. - ທຄຕລ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.	

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ທຄຕລ ສາມາດປະຕິບັດໄດ້ທັງໝົດ (FA) 65%, ປະຕິບັດໄດ້ບາງສ່ວນ (PA) ຄິດເປັນ 8% ແລະ ບໍ່ສາມາດປະຕິບັດໄດ້ (NA) 27% ຂອງຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້ສອດຄ່ອງ	ຂໍ້ຄົງຄ້າງ
- ທຄຕລ ມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ໃນນັ້ນ, ປະກອບດ້ວຍສະມາຊິກສະພາບໍລິຫານເພດຍິງອີກດ້ວຍ. - ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານ ໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. - ສະພາບໍລິຫານ ປະກອບມີສະມາຊິກທັງໝົດ 09 ທ່ານ ແລະ ໃນນີ້ສະມາຊິກອິດສະຫຼະມີ 04 ທ່ານ (ຫຼາຍກວ່າ 1/3 ຂອງສະມາຊິກສະພາບໍລິຫານທັງໝົດ). - ສະມາຊິກອິດສະຫຼະ ມີອາຍຸການດຳລົງຕຳແໜ່ງລວມສູງສຸດບໍ່ເກີນ 8 ປີຕໍ່ເນື່ອງ. ຫຼັງຈາກຄົບອາຍຸການດຳລົງຕຳແໜ່ງດັ່ງກ່າວ ສະມາຊິກອິດສະຫຼະ ສາມາດສືບຕໍ່ເປັນຜູ້ທີ່ມີເງື່ອນໄຂໃນການຄັດເລືອກ ແລະ ດຳລົງຕຳແໜ່ງເປັນສະມາຊິກສະພາບໍລິຫານທີ່ບໍ່ແມ່ນສະມາຊິກອິດສະຫຼະໄດ້. - ສະມາຊິກສະພາບໍລິຫານແຕ່ລະຄົນ ໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນການປະຊຸມ.	- ປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ພ້ອມນັ້ນ ສະພາບໍລິຫານ ບໍ່ ໄດ້ຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະ. - ສະມາຊິກສະພາບໍລິຫານບໍ່ ໄດ້ເຂົ້າຮ່ວມກອງປະຊຸມສະພາບໍລິຫານຢ່າງໜ້ອຍ 3/4 ຂອງກອງປະຊຸມທັງໝົດ. - ຄະນະກຳມະການກຳນົດຄ່າຕອບແທນ ບໍ່ ໄດ້ຈັດປະຊຸມຢ່າງໜ້ອຍ 2 ຄັ້ງຕໍ່ປີ. - ສະພາບໍລິຫານບໍ່ ໄດ້ສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານ ສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນ. - ສະພາບໍລິຫານບໍ່ ໄດ້ກຳນົດອົງປະຊຸມຂອງກອງປະຊຸມສະພາບໍລິຫານຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ. - ສະພາບໍລິຫານບໍ່ ໄດ້ປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ. - ທຄຕລ ບໍ່ ໄດ້ເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ

- ກົດລະບຽບຂອງ ທຄຕລ ໄດ້ກຳນົດຈະແຈ້ງກ່ຽວກັບ ເງື່ອນໄຂ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ສະພາບໍລິຫານ. - ກົດລະບຽບກ່ຽວກັບສະພາບໍລິຫານໄດ້ເຜີຍແຜ່ຜ່ານເວັບ ໄຊຂອງ ທະນາຄານ. - ສະພາບໍລິຫານໄດ້ມີການຈັດກອງປະຊຸມສະພາບໍລິຫານ 10 ຄັ້ງໃນປີ 2022. - ສະພາບໍລິຫານໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບ ທິດທາງແຜນຍຸດທະສາດຂອງບໍລິສັດ. - ສະພາບໍລິຫານໄດ້ມີການແຕ່ງຕັ້ງ ຄະນະກຳມະການກວດ ສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳ ມະການຄັດເລືອກ. ຄະນະກຳມະການກຳນົດຜົນຕອບ ແທນ ຢ່າງຄົບຖ້ວນ ແລະ ປະທານຄະນະກຳມະການ ດັ່ງກ່າວແມ່ນສະມາຊິກອິດຫຼະ. - ຄະນະກຳມະການກວດສອບ ແລະ ປະທານຄະນະກຳມະ ການກວດສອບເປັນຜູ້ທີ່ມີຄວາມຮູ້ ແລະ ປະສົບການ ທາງບັນຊີ. - ສະພາບໍລິຫານໄດ້ຮັບຮອງລະບຽບພາຍໃນກ່ຽວກັບ ຄະນະກຳມະການຕ່າງໆ ແລະ ເຜີຍແຜ່ລະບຽບດັ່ງກ່າວ ໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງທະນາຄານ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ສ້າງ ແລະ ຄຸ້ມ ຄອງ ຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.	ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານ ການເຄື່ອນໄຫວທຸລະກິດປະຈຳປີ.

4. ສິ່ງທີ່ຕ້ອງໄດ້ປັບປຸງ

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງທະນາຄານ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ທຄຕລ ຄວນແກ້ໄຂບັນຫາຂໍ້ຄົງຄ້າງ ດັ່ງນີ້:

- ຄວນນຳໄປຜັນຂະຫຍາຍ ແລະ ກຳນົດໄວ້ໃນກົດລະບຽບພາຍໃນຂອງບໍລິສັດຕື່ມກ່ຽວກັບການລົງທຶນ, ການ ຊື້ ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ ທີ່ຕ້ອງໄດ້ຮັບການຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ;
- ສະພາບໍລິຫານຄວນຮັບຮອງນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ;

- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນການຢູ່;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ.

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ທຄຕລ ຄວນເພີ່ມຄວາມເອົາໃຈໃສ່ ດັ່ງນີ້:

- ຄວນເປີດເຜີຍຂໍ້ມູນກ່ຽວກັບການດຳເນີນທຸລະກິດ ແລະ ນະໂຍບາຍຕ່າງໆເຊັ່ນ ນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ, ນະໂຍບາຍກ່ຽວກັບຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ສ້າງ ແລະ ເປີດເຜີຍມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນ, ເງື່ອນໄຂ ແລະ ການແຕ່ງຕັ້ງສະພາບໍລິຫານ ແລະ ຄະນະອຳນວຍການ;
- ຄວນລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ;
- ຄວນເປີດເຜີຍຄ່າບໍລິການອື່ນຂອງບໍລິສັດກວດສອບ ທີ່ບໍ່ກ່ຽວຂ້ອງກັບບໍລິສັດກວດສອບເອກະສານລາຍງານການເງິນ (ຖ້າມີ ຫຼື ບໍ່ມີກໍຕາມ);
- ປະທານສະພາບໍລິຫານ ຄວນແມ່ນສະມາຊິກອິດສະຫຼະ. ກໍລະນີປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ຄວນພິຈາລະນາຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະ;
- ຄວນຈັດການປະຊຸມຄະນະກຳມະການກຳນົດຄ່າຕອບແທນຢ່າງໜ້ອຍ 2 ຄັ້ງຕໍ່ປີ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານ ສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ສະພາບໍລິຫານຄວນຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານທີ່ ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື;
- ຄວນກຳນົດອົງປະຊຸມຂອງກອງປະຊຸມສະພາບໍລິຫານຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ.
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ;
- ສະພາບໍລິຫານຄວນເຜີຍແຜ່ມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

ຜູ້ອຳນວຍການໃຫຍ່ ຕລຊລ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸພັ ຖິ່ນໄຊພອນ